ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1195 /ອຄ.

ນະຄອນຫຼວງວຽງຈັນ, ວັນທີ 19 ເມສາ 2009

# ຂໍ້ຕົກລົງ

## ວ່າດ້ວຍ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ກວດກາ ໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ

- ອີງຕາມ ມາດຕາ 44, 45, 46 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 01/99/ສພຊ, ລົງວັນທີ່ 3/4/99 ແລະມາດຕາ 7 ຂອງດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ເລກທີ 67/ນຍ, ລົງວັນທີ່ 12/4/06.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 188/ນຍ, ລົງວັນທີ່ 17/8/06.

**ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອແບ່ງສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ກວດກາໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ໃນຂອບເຂດທົ່ວປະເທດ, ໂດຍສະເພາະແມ່ນ ການອອກອະນຸຍາດດຳເນີນ, ຕໍ່ອາຍຸ ແລະ ຂະຫຍາຍໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ, ລວມທັງການຕິດຕາມ ແລະ ກວດ ກາ ມາດຕະຖານເຕັກນິກໂຮງງານ, ວັດຖຸດິບ, ຜະລິດຕະພັນ, ຄວາມປອດໄພ ແລະ ສຸຂະອະນາໄມໂຮງງານ, ດ້ານສິ່ງແວດລ້ອມໂຮງງານ ແລະ ສະພາບການດຳເນີນກິດຈະການ ຂອງບັນດາໂຮງງານອຸດສາຫະກຳ ແລະ ຫັດ ຖະກຳປຸງແຕ່ງ.

### ມາດຕາ 2. ການອອກໃບອະນຸຍາດດຳເນີນ, ຕໍ່ອາຍຸ ແລະ ຂະຫຍາຍໂຮງງານ

ທຸກໆ ການດຳເນີນກິດຈະການ, ຕໍ່ອາຍຸ ແລະ ຂະຫຍາຍໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ທຸກປະເພດ ຢູ່ໃນ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ປະຕິບັດຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 3. ຫຼັກການຂອງການອອກໃບອະນຸຍາດດຳເນີນ, ຕໍ່ອາຍຸ ແລະ ຂະຫຍາຍໂຮງງານ

ພາຍຫຼັງທີ່ໂຮງງານໄດ້ສ້າງຕັ້ງຂຶ້ນໂດຍຮັບປະກັນຄວາມຖືກຕ້ອງ ແລະ ຄົບຖ້ວນ ຕາມມາດຕະຖານເຕັກນິກຂອງໂຮງງານ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ່ 30/7/07. ຂະແໜງອຸດສາຫະກຳ ແລະ ການຄ້າເປັນຜູ້ພິຈາລະນາ ໃນການອອກໃບອະນຸ

ຍາດດຳເນີນກິດຈະການໂຮງງານ, ຕໍ່ອາຍຸໃບອະນຸຍາດ ແລະ ອອກໃບອະນຸຍາດຂະຫຍາຍໂຮງງານ ຕາມມາດຕາ 11, 21 ແລະ ມາດຕາ 36 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

**ມາດຕາ 4. ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານ**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ຢູ່ໃນ ສປປ ລາວ ຕ້ອງປະຕິບັດສິດ ແລະ ພັນທະ ຂອງຕົນ ຕາມມາດຕາ 41 ແລະ ມາດຕາ 42 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງອື່ນໆ ຂອງ ສປປ ລາວ.

**ມາດຕາ 5. ສິດ ແລະ ໜ້າທີ່ ຂອງກົມອຸດສາຫະກຳ**

ກົມອຸດສາຫະກຳ ມີສິດ ແລະ ໜ້າທີ່ ຄືດັ່ງນີ້:

**5.1.** ອອກໃບອະນຸຍາດດຳເນີນກິດຈະການ, ຕໍ່ອາຍຸໃບອະນຸຍາດ, ອອກໃບອະນຸຍາດຂະຫຍາຍໂຮງງານ ແລະ ລຶບລ້າງໃບອະນຸຍາດ ຕາມຂໍ້ຕົກລົງເລກທີ 1301/ອຄ, ລົງວັນທີ່ 30/7/07 ຂອງບັນດາໂຮງງານລະດັບ I, II, III ( ຕາມມາດຕາ 10 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ) ທີ່ໄດ້ຜ່ານການອະນຸຍາດລົງທຶນ ຈາກກະຊວງແຜນການ ແລະ ການລົງທຶນ.

- ໃນການພິຈາລະນາອອກໃບອະນຸຍາດ ຫຼື ລຶບລ້າງໃບອະນຸຍາດ ໃນກໍລະນີມີຄວາມຈຳເປັນ ໃຫ້ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ ເປັນແຕ່ລະກໍລະນີ.

**5.2.** ອອກໃບຢັ້ງຢືນຜະລິດຕະພັນອຸດສາຫະກຳ (ຕາມມາດຕາ 4 ແລະ ມາດຕາ 63 ຂອງກົດໝາຍວ່າດ້ວຍມາດຕະຖານ).

**5.3.** ອອກໃບຢັ້ງຢືນດ້ານສິ່ງແວດລ້ອມໂຮງງານ IEE (Initial Environment Examination) ຫຼື EMP (Environment Management Plan) ໃຫ້ແກ່ໂຮງງານ ຕາມທີ່ລະບຸໄວ້ໃນຂໍ້ 5.1 ຂ້າງເທິງນີ້.

**5.4.** ຕິດຕາມ, ກວດກາ ມາດຕະຖານເຕັກນິກໂຮງງານ, ວັດຖຸດິບ, ຜະລິດຕະພັນ, ຄວາມປອດໄພ ແລະ ສຸຂະອະນາໄມໂຮງງານ, ດ້ານສິ່ງແວດລ້ອມໂຮງງານ ແລະ ສະພາບການດຳເນີນກິດຈະການ ຂອງບັນດາໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ທຸກໆໂຮງງານ ໃນຂອບເຂດທົ່ວປະເທດ.

**ມາດຕາ 6. ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຄືດັ່ງນີ້:

**6.1.** ອອກໃບອະນຸຍາດດຳເນີນກິດຈະການ, ຕໍ່ອາຍຸໃບອະນຸຍາດ, ອອກໃບອະນຸຍາດຂະຫຍາຍໂຮງງານ ແລະ ລຶບລ້າງໃບອະນຸຍາດ ຕາມຂໍ້ຕົກລົງເລກທີ 1301/ອຄ, ລົງວັນທີ່ 30/7/07 ຂອງບັນດາໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ຄື:

**1).** ໂຮງງານລະດັບ I, II, III ( ຕາມມາດຕາ 10 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ) ທີ່ໄດ້ຜ່ານການອະນຸຍາດລົງທຶນຂັ້ນແຂວງ, ນະຄອນຫຼວງ ຫຼື ຜ່ານການຂຶ້ນທະບຽນວິສາຫະກິດຂັ້ນແຂວງ, ນະຄອນຫຼວງ (ສຳຫຼັບໂຮງງານທີ່ບໍ່ໄດ້ຜ່ານການຂໍອະນຸຍາດລົງທຶນ).

**2).** ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທຸກຂັ້ນ ແລະ ທຸກຂະໜາດ.

**3).** ໂຮງງານຂະໜາດນ້ອຍ, ແບບຄອບຄົວ ທຸກປະເພດ ທີ່ນຳໃຊ້ແຮງງານຄົນຕ່ຳກວ່າ 10 ຄົນ ຫຼື ນຳໃຊ້ເຄື່ອງຈັກ ຕ່ຳກວ່າ 5 ແຮງມ້າ (ຕ່ຳກວ່າໂຮງງານລະດັບທີ III) ທີ່ບໍ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

- ໃນການພິຈາລະນາອອກໃບອະນຸຍາດ ຫຼື ລຶບລ້າງໃບອະນຸຍາດ ໃນກໍລະນີມີຄວາມຈຳເປັນ ໃຫ້ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງ ເປັນແຕ່ລະກໍລະນີ.

6.2. ອອກໃບຢັ້ງຢືນຜະລິດຕະພັນຂອງໂຮງງານ (ຢັ້ງຢືນຜະລິດຕະພັນທີ່ຜະລິດໄດ້ຢູ່ໃນໂຮງງານ).

6.3. ອອກໃບຢັ້ງຢືນດ້ານສິ່ງແວດລ້ອມໂຮງງານ IEE (Initial Environment Examination) ຫຼື EMP (Environment Management Plan) ທີ່ລະບຸໄວ້ໃນຂໍ້ 1), 2) ແລະ ຂໍ້ 3) ຂອງຂໍ້ 6.1 ມາດຕາ 6 ໃນຂໍ້ຕົກລົງສະບັບນີ້.

6.4. ໃນກໍລະນີ ການຂໍອະນຸຍາດດໍາເນີນກິດຈະການ, ຕໍ່ອາຍຸໃບອະນຸຍາດ, ຂະຫຍາຍໂຮງງານ ແລະ ລົບລ້າງໃບອະນຸຍາດ ຫາກແມ່ນສິດຂອງກົມອຸດສາຫະກໍາ ຕາມມາດຕາ 5 ຂອງຂໍ້ຕົກລົງສະບັບນີ້, ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຄົ້ນຄວ້າ ປະກອບຄໍາເຫັນ ທາງດ້ານວິຊາການ ແລະ ລາຍງານລະອຽດກ່ຽວກັບບັນຫາດັ່ງກ່າວ, ພ້ອມທັງຂັດຕິດເອກະສານທີ່ກ່ຽວຂ້ອງ ແລ້ວສົ່ງໃຫ້ກົມອຸດສາຫະກໍາ ເພື່ອພິຈາລະນາຕາມລະບຽບການ.

6.5. ຕິດຕາມ, ກວດກາ ມາດຕະຖານເຕັກນິກໂຮງງານ, ວັດຖຸດິບ, ຜະລິດຕະພັນ, ຄວາມປອດໄພ ແລະ ສຸຂະອະນາໄມໂຮງງານ, ດ້ານສິ່ງແວດລ້ອມໂຮງງານ ແລະ ສະພາບການດໍາເນີນກິດຈະການ ຂອງບັນດາໂຮງງານອຸດສາຫະກໍາ ແລະ ຫັດຖະກໍາປຸງແຕ່ງ ທຸກໆໂຮງງານ ໃນຂອບເຂດແຂວງຂອງຕົນ.

- ໃນການລົງກວດກາບັນດາໂຮງງານອຸດສາຫະກໍາ ແລະ ຫັດຖະກໍາປຸງແຕ່ງ ກ່ອນການອອກອະນຸຍາດ ຫຼື ຫຼັງການອອກອະນຸຍາດ ຕາມມາດຕາ 5 ແລະ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້; ກໍລະນີຫາກມີຄວາມຈໍາເປັນທາງດ້ານວິຊາການ ໃຫ້ເຊີນເອົາວິຊາການຈາກຂະແໜງການທີ່ກ່ຽວຂ້ອງ ແລະ ກົມອຸດສາຫະກໍາ ເຂົ້າຮ່ວມນໍາ.

6.6. ຢັ້ງຢືນການນໍາເຂົ້າວັດຖຸດິບ, ເຄື່ອງຈັກ, ອຸປະກອນຮັບໃຊ້ໃຫ້ແກ່ການຜະລິດ, ໂດຍພິຈາລະນາຕາມແຜນການຜະລິດປະຈໍາປີ, ແຜນການປັບປຸງ ແລະ ແຜນການຂະຫຍາຍກິດຈະການ ຂອງໂຮງງານ.

6.7. ສະຫຼຸບ ລາຍງານ ສະພາບການເຄື່ອນໄຫວຂອງໂຮງງານ, ດ້ານສິ່ງແວດລ້ອມໂຮງງານ, ສະຖິຕິໂຮງງານ, ສະຖິຕິການຜະລິດ ຫຼື ຜະລິດຕະພັນອຸດສາຫະກໍາ, ສະຖິຕິດ້ານສິ່ງແວດລ້ອມໂຮງງານ ແລະ ການເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງບັນດາໂຮງງານ ທີ່ຕັ້ງຢູ່ໃນຂອບເຂດແຂວງຂອງຕົນ ແລ້ວສົ່ງໃຫ້ກົມອຸດສາຫະກໍາ ທຸກໆ 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ ຕາມລະບຽບການ, ເພື່ອສັງລວມ ລາຍງານຂັ້ນເທິງເປັນແຕ່ລະໄລຍະ.

**ມາດຕາ 7. ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ**

ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ ມີສິດ ແລະ ໜ້າທີ່ ຄື: ອອກໃບອະນຸຍາດດໍາເນີນກິດຈະການ, ຕໍ່ອາຍຸໃບອະນຸຍາດ, ຂະຫຍາຍໂຮງງານ ແລະ ລົບລ້າງໃບອະນຸຍາດ ພາຍໃຕ້ການຊີ້ນໍາ ແລະ ການມອບໝາຍຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕາມມາດຕາ 46 ຂອງກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ, ໂດຍໃຫ້ແທດເໝາະກັບເງື່ອນໄຂ, ສະພາບຕົວຈິງ ແລະ ຈຸດພິເສດຂອງທ້ອງຖິ່ນ ໃນແຕ່ລະໄລຍະ, ບົນພື້ນຖານການຕົກລົງເຫັນດີຈາກເຈົ້າເມືອງ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂອງເມືອງ. ຕິດຕາມກວດກາ ໂຮງງານອຸດສາຫະກໍາ ແລະ ຫັດຖະກໍາປຸງແຕ່ງ ທີ່ຕັ້ງຢູ່ໃນຂອບເຂດເມືອງຂອງຕົນ.

**ມາດຕາ 8. ການຄຸ້ມຄອງ ແລະ ກວດກາ ດ້ານສິ່ງແວດລ້ອມໂຮງງານ**

ການຄຸ້ມຄອງ ແລະ ກວດກາ ດ້ານສິ່ງແວດລ້ອມໂຮງງານອຸດສາຫະກໍາ ແລະ ຫັດຖະກໍາປຸງແຕ່ງ ທີ່ລະບຸໄວ້ໃນມາດຕາ 18, 19, 20 ຂອງກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ໃຫ້ປະຕິບັດຕາມຂໍ້ຕົກລົງວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມໂຮງງານອຸດສາຫະກໍາປຸງແຕ່ງ ເລກທີ 1222/ອຫ, ລົງວັນທີ່ 7/2/05 ແລະ ຂໍ້ກໍານົດກ່ຽວກັບການປ່ອຍນໍ້າເປື້ອນ ແລະ ນໍາເສຍຄຸນອອກຈາກໂຮງງານອຸດສາຫະກໍາປຸງແຕ່ງ ເລກທີ 326/ອຫ, ລົງວັນທີ່ 6/10/05 ແລະ ຂໍ້ຕົກລົງອື່ນໆ ທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 9. ການປະກອບເອກະສານຂໍອະນຸຍາດ**

ການປະກອບເອກະສານ ຂໍອະນຸຍາດດໍາເນີນກິດຈະການ, ຕໍ່ອາຍຸໃບອະນຸຍາດ, ຂະຫຍາຍໂຮງງານ ໃຫ້ປະຕິບັດຕາມມາດຕາ 5, 8 ແລະ ມາດຕາ 11 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກໍາປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ່ 30/7/07.

ແບບຟອມຄໍາຮ້ອງຂໍອະນຸຍາດດໍາເນີນກິດຈະການ, ຕໍ່ອາຍຸ ແລະ ຂະຫຍາຍໂຮງງານ ສາມາດຊື້ໄດ້ຢູ່ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ບ່ອນທີ່ໂຮງງານຕັ້ງຢູ່ ຫຼື ຊື້ຢູ່ກົມອຸດສາຫະກໍາ ກໍ່ໄດ້. ໃນນີ້, ວິຊາການຢູ່ບ່ອນທີ່ຂາຍຄໍາຮ້ອງນັ້ນ ຕ້ອງໃຫ້ການແນະນໍາ ແກ່ຜູ້ປະກອບກິດຈະການໂຮງງານ ໃນການປະກອບເອກະສານທີ່ກ່ຽວຂ້ອງໃຫ້ຄົບຖ້ວນ ແລະ ຖືກຕ້ອງ.

**ມາດຕາ 10. ຂັ້ນຕອນການພິຈາລະນາອອກໃບອະນຸຍາດ**

ຂັ້ນຕອນການພິຈາລະນາອອກໃບອະນຸຍາດດໍາເນີນ, ຕໍ່ອາຍຸ ແລະ ຂະຫຍາຍໂຮງງານ ໃຫ້ປະຕິບັດ ຕາມມາດຕາ 6, 8 ແລະ ມາດຕາ 11 ຂອງຂໍ້ຕົກລົງເລກທີ 1301/ອຄ, ລົງວັນທີ່ 30/7/07.

ໃນກໍລະນີທີ່ເປັນສິດຂອງພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ທີ່ກໍານົດໄວ້ໃນ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້. ແຂວງໃດ ເຫັນວ່າມີຄວາມຫຍຸ້ງຍາກທາງດ້ານວິຊາການ ໃນການຄົ້ນຄວ້າພິຈາລະນາອອກອະນຸຍາດ ໂດຍສະເພາະໂຮງງານຂະໜາດໃຫຍ່ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມສູງ ແມ່ນສາມາດ ມອບໃຫ້ກົມອຸດສາຫະກໍາ ເປັນຜູ້ພິຈາລະນາຕາມແຕ່ລະກໍລະນີ, ໂດຍໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ປະຕິບັດຕາມຂັ້ນຕອນຂອງຂໍ້ 6.4 ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 11. ການຈັດຕັ້ງປະຕິບັດ**

**11.1.** ມອບໃຫ້ກົມອຸດສາຫະກໍາ ເປັນຜູ້ຊີ້ນໍາ, ຕິດຕາມ ກວດກາ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ, ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ ແລະ ໃຫ້ມີຄວາມເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ.

**11.2.** ມອບໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ຂອງຕົນ ເພື່ອໃຫ້ໄດ້ຮັບຜົນດີ ແລະ ເຂັ້ມງວດ.

**ມາດຕາ 12. ຜົນສັກສິດ ແລະ ການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນໍາໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ກວດກາໂຮງງານອຸດສາຫະກໍາ ແລະ ຫັດຖະກໍາປຸງແຕ່ງ **ເລກທີ 053/ອຫ, ລົງວັນທີ່ 13/2/03**. ບັນດາລະບຽບການ ແລະ ແຈ້ງການ ທີ່ປະກາດໃຊ້ມາກ່ອນ ຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ ແລະ ໃຫ້ນໍາໃຊ້ຂໍ້ຕົກລົງສະບັບນີ້ ປ່ຽນແທນ.

**ລັດຖະມົນຕີວ່າການ**

**ກະຊວງອຸດສາຫະກໍາ ແລະ ການຄ້າ**

**ດຣ. ນາມ ວິຍະເກດ**